ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 24 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 16 JUL 2021

# ຂໍ້ຕົກລົງ

# ວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0071/ສຄຄຊ, ລົງວັນທີ 7 ກໍລະກົດ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຂອງນັກວິຊາຊີບທຸລະກິດຫຼັກຊັບ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວຂອງນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ຖືກຕ້ອງຕາມລະບຽບການ ແລະ ມີປະສິດທິພາບ ແນໃສ່ຮັບປະກັນໃຫ້ການເຄື່ອນໄຫວຂອງນັກວິຊາຊີບທຸລະກິດຫຼັກຊັບດັ່ງກ່າວ ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ໃໝ່) ການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ**

ການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ແມ່ນ ການສ້າງເງື່ອນໄຂໃຫ້ ນັກວິຊາຊີບທຸລະກິດຫຼັກຊັບໄດ້ຮັບການພັດທະນາ, ມີການຂະຫຍາຍຕົວ ລວມທັງ ການຕິດຕາມ, ກວດກາ ການເຄື່ອນໄຫວຂອງ ນັກວິຊາຊີບທຸລະກິດຫຼັກຊັບທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ໃຫ້ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 3 (ໃໝ່) ຫຼັກການ

ການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ພາຍໃນ ແລະ ຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີຄວາມຮູ້ຄວາມສາມາດ ແລະ ຈັນຍາບັນ ທາງດ້ານວິຊາຊີບທຸລະກິດຫຼັກຊັບ;
2. ຮັບປະກັນການ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຢ່າງລວມສູນ;
3. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 4 (ປັບປຸງ) ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດເປັນນັກວິຊາຊີບທຸລະກິດຫຼັກຊັບ

### ມາດຕາ 5 (ປັບປຸງ) ນັກວິຊາຊີບທຸລະກິດຫຼັກຊັບ

ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນ ພະນັກງານຂອງ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ແມ່ນ ພະນັກງານຂອງ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ຕ່າງປະເທດ ທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຈາກອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ ແລ້ວມີຈຸດປະສົງ ເຂົ້າມາເຄື່ອນໄຫວວຽກງານຫຼັກຊັບ ຮ່ວມກັບ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ຫຼື ເປັນບຸກຄົນຕ່າງປະເທດທີ່ສັງກັດ ແລະ ເປັນພະນັກງານປະຈຳຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ.

ນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງເຂົ້າຮ່ວມການຝຶກອົບຮົມ ຫຼື ທົບທວນ ຕາມເນື້ອໃນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຂຶ້ນ ພ້ອມທັງຕ້ອງປະຕິບັດພັນທະອາກອນ ແລະ ພັນທະທາງດ້ານການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງຄົບຖ້ວນ ແລະ ຖືກຕ້ອງ.

### ມາດຕາ 6 (ປັບປຸງ) ການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ

ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ມີຈຸດປະສົງຂໍໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ແກ່ພະນັກງານຂອງຕົນ ຫຼື ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ຂອງບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ເຮັດສັນຍາບໍລິການຮ່ວມກັບຕົນ ຕ້ອງປະກອບເອກະສານການຂໍອະນຸຍາດເປັນນັກວິຊາຊີບທຸລະກິດຫຼັກຊັບ ຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາ.

**ມາດຕາ 7 (ປັບປຸງ) ເງື່ອນໄຂການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ**

ການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ຂອງພະນັກງານທີ່ສັງກັດຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ໄດ້ເຂົ້າຮຽນ ແລະ ສອບເສັງຜ່ານຫຼັກສູດວິຊາຊີບທຸລະກິດຫຼັກຊັບ ຕາມປະເພດທີ່ສະເໜີຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ;
3. ເປັນພະນັກງານປະຈໍາຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ;
4. ບໍ່ຖືກດໍາເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ ຫຼື ກະທໍາຜິດທາງດ້ານການເງິນ ຢູ່ພາຍໃນ ແລະ ຕ່າງປະເທດ;
5. ເງື່ອນໄຂອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບ ການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ຂອງພະນັກງານທີ່ສັງກັດຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ຕ້ອງເປັນນັກວິຊາຊີບທຸລະກິດຫຼັກຊັບ ທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ ແລະ ອົງການຄຸ້ມຄອງວຽກງານຫຼັກຊັບຂອງປະເທດດັ່ງກ່າວຕ້ອງ ເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ;
3. ສອບເສັງຜ່ານພາກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ;
4. ບໍ່ຖືກດໍາເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ ຫຼື ກະທໍາຜິດທາງດ້ານການເງິນ ຢູ່ພາຍໃນ ແລະ ຕ່າງປະເທດ;
5. ມີສັນຍາບໍລິການຮ່ວມກັບ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ;
6. ເງື່ອນໄຂອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 (ປັບປຸງ) ເອກະສານປະກອບການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ**

ເອກະສານປະກອບການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ຂອງ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ມີດັ່ງນີ້:

1. ຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ສໍາເນົາໃບຢັ້ງຢືນການສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕາມປະເພດທີ່ສະເໜີຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ;
3. ສໍາເນົາສັນຍາແຮງງານລະຫວ່າງ ພະນັກງານທີ່ຕ້ອງການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ກັບ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ;
4. ໃບແຈ້ງໂທດຈາກອົງການທີ່ມີສິດອໍານາດກ່ຽວຂ້ອງພາຍໃນ ສປປ ລາວ ບໍ່ໃຫ້ກາຍ 3 ເດືອນຍ້ອນຫຼັງ ນັບແຕ່ວັນຍື່ນເອກະສານປະກອບຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;
5. ໃບຢັ້ງຢືນທີ່ຢູ່ປັດຈຸບັນ ແລະ ສໍາເນົາ ບັດປະຈໍາຕົວ;

6. ຮູບຖ່າຍ ບໍ່ເກີນ ສາມເດືອນ ຂະໜາດ 3 x 4 ຈໍານວນ 3 ໃບ;

7. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ທີ່ຕ້ອງການຂໍໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ແກ່ ນັກວິຊາຊີບທຸລະກິດຫຼັກຊັບຂອງ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ຕ່າງປະເທດ ທີ່ເຮັດສັນຍາບໍລິການຮ່ວມກັບຕົນ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ສໍາເນົາໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ;

3. ສໍາເນົາໃບຢັ້ງຢືນການສອບເສັງຜ່ານບັນດາ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ;

4. ໃບແຈ້ງໂທດຈາກອົງການທີ່ມີສິດອໍານາດກ່ຽວຂ້ອງຕ່າງປະເທດ ບໍ່ໃຫ້ກາຍ 3 ເດືອນ ຍ້ອນຫຼັງນັບແຕ່ວັນຍື່ນເອກະສານປະກອບຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;

5. ສໍາເນົາໜັງສືຜ່ານແດນຂອງນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ;

6. ສໍາເນົາສັນຍາບໍລິການລະຫວ່າງ ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ກັບ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ສະຖາບັນສື່ກາງດ້ານຫຼັກຊັບອື່ນທີ່ຕັ້ງຢູ່ ສປປ ລາວ;

7. ຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ 3 x 4 ຈໍານວນ 3 ໃບ;

8. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

### ມາດຕາ 9 (ປັບປຸງ) ການພິຈາລະນາການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາເອກະສານປະກອບ ການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ພາຍໃນເວລາ 15 ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

## ໝວດທີ 3
## ປະເພດ ແລະ ອາຍຸ ຂອງນັກວິຊາຊີບທຸລະກິດຫຼັກຊັບ, ການໂຈະ ແລະ ການຖອນ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ແລະ ການຄຸ້ມຄອງ ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດທີ່ບໍລິການຂ້າມແດນ

### ມາດຕາ 10 (ປັບປຸງ) ປະເພດນັກວິຊາຊີບທຸລະກິດຫຼັກຊັບ

ນັກວິຊາຊີບທຸລະກິດຫຼັກຊັບ ປະກອບດ້ວຍ 6 ປະເພດ ຄື:

1. ນາຍໜ້າຊື້ ຂາຍຫຼັກຊັບ;

2. ຜູ້ຄ້າຫຼັກຊັບ;
3. ທີ່ປຶກສາດ້ານການເງິນ;
4. ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ;
5. ຜູ້ວິເຄາະຫຼັກຊັບ;
6. ຜູ້ບໍລິຫານກອງທຶນເພື່ອການລົງທຶນ.

**ມາດຕາ 11 (ປັບປຸງ) ນາຍໜ້າຊື້ ຂາຍຫຼັກຊັບ**

ນາຍໜ້າຊື້ ຂາຍຫຼັກຊັບ ແມ່ນພະນັກງານຂອງ ບໍລິສັດຫຼັກຊັບ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ເຮັດໜ້າທີ່ເປັນສື່ກາງ ຫຼື ເປັນຕົວແທນ ໃນການສົ່ງ ຄໍາສັ່ງຊື້ ຂາຍຫຼັກຊັບ ຫຼື ຍົກເລີກຄໍາສັ່ງຊື້ ຂາຍຫຼັກຊັບ ຂອງລູກຄ້າ.

**ມາດຕາ 12 (ໃໝ່) ຜູ້ຄ້າຫຼັກຊັບ**

ຜູ້ຄ້າຫຼັກຊັບ ແມ່ນພະນັກງານຂອງ ບໍລິສັດຫຼັກຊັບ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ເຮັດໜ້າທີ່ໃນການສົ່ງຄໍາສັ່ງຊື້ ຂາຍຫຼັກຊັບ ຫຼື ຍົກເລີກຄໍາສັ່ງຊື້ ຂາຍຫຼັກຊັບ ໃນນາມບໍລິສັດຂອງຕົນ.

**ມາດຕາ 13 (ປັບປຸງ) ທີ່ປຶກສາດ້ານການເງິນ**

ທີ່ປຶກສາດ້ານການເງິນ ແມ່ນພະນັກງານຂອງ ບໍລິສັດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ເຮັດໜ້າທີ່ໃນການ ໃຫ້ຄໍາປຶກສາ ກ່ຽວກັບການກະກຽມຄວາມພ້ອມໃນການອອກຈໍາໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເປັນຕົ້ນ ການຄວບ, ການແຍກ ແລະ ການຄອບຄອງ ກິດຈະການ, ການຄຸ້ມຄອງບໍລິຫານ, ດ້ານການເງິນ, ການດໍາເນີນທຸລະກິດ ແລະ ໃຫ້ຄໍາປຶກສາດ້ານອື່ນ ທີ່ຖືກຕ້ອງຕາມການກໍານົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 (ໃໝ່) ທີ່ປຶກສາດ້ານການລົງທຶນກ່ຽວກັບຫຼັກຊັບ**

ທີ່ປຶກສາດ້ານການລົງທຶນກ່ຽວກັບຫຼັກຊັບ ແມ່ນພະນັກງານຂອງ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຮັດໜ້າທີ່ໃນການໃຫ້ຄໍາປຶກສາໂດຍກົງແກ່ຜູ້ລົງທຶນ ເພື່ອລົງທຶນໃສ່ ຫຼັກຊັບ, ກຸ່ມຫຼັກຊັບ, ໜ່ວຍລົງທຶນ ເປັນຕົ້ນ ສະໜອງຂໍ້ມູນກ່ຽວກັບການວິເຄາະກ່ຽວກັບຫຼັກຊັບ ຫຼື ກຸ່ມຫຼັກຊັບ ແລະ ໃຫ້ຄໍາປຶກສາດ້ານອື່ນ ທີ່ຖືກຕ້ອງຕາມການກໍານົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 (ປັບປຸງ) ຜູ້ວິເຄາະຫຼັກຊັບ**

ຜູ້ວິເຄາະຫຼັກຊັບ ແມ່ນພະນັກງານຂອງ ບໍລິສັດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ເຮັດໜ້າທີ່ໃນການ ຄົ້ນຄວ້າ ແລະ ປະເມີນສະພາບເສດຖະກິດຂອງປະເທດ, ຂະແໜງການ ແລະ ວິເຄາະຫຼັກຊັບ ຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ.

**ມາດຕາ 16 (ປັບປຸງ) ຜູ້ບໍລິຫານກອງທຶນເພື່ອການລົງທຶນ**

ຜູ້ບໍລິຫານກອງທຶນເພື່ອການລົງທຶນ ໃນກອງທຶນຮ່ວມ ແມ່ນ ພະນັກງານຂອງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຮັດໜ້າທີ່ໃນການ ຕັດສິນໃຈລົງທຶນໃສ່ເປົ້າໝາຍການ

ລົງທຶນຂອງກອງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 43 ໂດຍສອດຄ່ອງກັບຈຸດປະສົງ ແລະ ນະໂຍບາຍການລົງທຶນ ທີ່ໄດ້ກຳນົດໄວ້ໃນລະບຽບ ຫຼື ສັນຍາການຄຸ້ມຄອງບໍລິຫານຊັບສິນ.

ຜູ້ບໍລິຫານກອງທຶນເພື່ອການລົງທຶນ ໃນກອງທຶນສ່ວນບຸກຄົນ ແມ່ນ ພະນັກງານຂອງ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຮັດໜ້າທີ່ໃນການຕັດສິນໃຈລົງທຶນໃສ່ກອງທຶນສ່ວນບຸກຄົນ ແລະ ເປົ້າໝາຍການລົງທຶນຂອງກອງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 43 ໂດຍສອດຄ່ອງກັບຈຸດປະສົງ ແລະ ນະໂຍບາຍການລົງທຶນ ທີ່ໄດ້ກຳນົດໄວ້ໃນລະບຽບ ຫຼື ສັນຍາການຄຸ້ມຄອງບໍລິຫານຊັບສິນ.

**ມາດຕາ 17 (ປັບປຸງ) ອາຍຸການເປັນນັກວິຊາຊີບທຸລະກິດຫຼັກຊັບ**

ນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ມີອາຍຸການ 2 ປີ ນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ເປັນຕົ້ນໄປ.

**ມາດຕາ 18 (ໃໝ່) ການຕໍ່ອາຍຸເປັນນັກວິຊາຊີບທຸລະກິດຫຼັກຊັບ**

ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ທີ່ມີຈຸດປະສົງໃຫ້ນັກວິຊາຊີບທຸລະກິດຫຼັກຊັບຂອງຕົນ ຫຼື ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ສືບຕໍ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ອນທີ່ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈະໝົດອາຍຸ 30 ວັນ.

**ມາດຕາ 19 (ໃໝ່) ການໂຈະໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ**

ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງຕໍ່ໄປນີ້:

1. ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ບົນພື້ນຖານການສະໜອງຂໍ້ມູນ ຫຼື ເອກະສານ ທີ່ບໍ່ຖືກຕ້ອງ;
2. ສະໜອງຂໍ້ມູນ ຫຼື ເອກະສານ ກ່ຽວກັບການເຄື່ອນໄຫວເຮັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
3. ປະຕິບັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ບໍ່ສອດຄ່ອງກັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທີ່ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ ໃຫ້ແກ່ຕົນເອງ ຫຼື ບຸກຄົນອື່ນ;
5. ຮ່ວມມືກັບລູກຄ້າໃນການຊື້ ຂາຍຫຼັກຊັບ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ໂຈະໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 20 (ປັບປຸງ) ການຖອນໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ

ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ຈະຖືກຖອນ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງຕໍ່ໄປນີ້:

1. ບໍ່ໄດ້ເປັນພະນັກງານຂອງ ບໍລິສັດຫຼັກຊັບ ແລະ/ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ;
2. ຖືກຊັບຊ້ອນ ຫຼື ຍົກຍ້າຍ ໄປເຮັດໜ້າທີ່ ນັກວິຊາຊີບທຸລະກິດຫຼັກຊັບປະເພດໃໝ່ ຫຼື ໜ້າທີ່ອື່ນທີ່ບໍ່ຕິດພັນກັບການເຮັດໜ້າທີ່ຂອງນັກວິຊາຊີບທຸລະກິດຫຼັກຊັບ ຕາມໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອອກໃຫ້;
3. ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບອື່ນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;
4. ຖອນໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຕ້ອງນຳສົ່ງໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນຖືກຖອນໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ເປັນຕົ້ນໄປ.

## ໝວດທີ 4
## ຄ່າບໍລິການ ແລະ ຂໍ້ຫ້າມ

ມາດຕາ 21 (ປັບປຸງ) ຄ່າບໍລິການ

ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງເສຍຄ່າບໍລິການໃນການຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 2.000.000 ກີບ ຕໍ່ຄົນ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຄ່າອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 5.000.000 ກີບ ຕໍ່ ໃບ ຕໍ່ ຄົນ ແລະຕ້ອງຊຳລະເງິນໃນວັນທີ່ໄດ້ຮັບ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ;
3. ຄ່າຕໍ່ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 3.000.000 ກີບ ຕໍ່ ໃບ ຕໍ່ ຄົນ ແລະຕ້ອງຊຳລະເງິນໃນວັນທີ່ໄດ້ຮັບ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ;
4. ຄ່າຄຸ້ມຄອງປະຈຳປີ ຈຳນວນ 2.000.000 ກີບ ຕໍ່ ຄົນ ຊຶ່ງຕ້ອງຊຳລະພາຍໃນ ໄຕມາດ 1 ຂອງປີຖັດໄປ.

ມາດຕາ 22 (ປັບປຸງ) ຂໍ້ຫ້າມ

ນັກວິຊາຊີບທຸລະກິດຫຼັກຊັບພາຍໃນ ນອກຈາກມີຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 179. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ຮັບມອບສິດຈາກລູກຄ້າ ຫຼື ຕັດສິນໃຈແທນລູກຄ້າ ໃນການຊື້ ຂາຍ ຫຼັກຊັບ ຫຼື ໂອນຫຼັກຊັບຂອງລູກຄ້າ;
2. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ ໃຫ້ແກ່ ຕົນເອງ ຫຼື ບຸກຄົນອື່ນ;

3. ຍັກຍອກ ຫຼື ສໍ້ໂກງ ເງິນ ຫຼື ຫຼັກຊັບຂອງລູກຄ້າ;

4. ຮ່ວມມືກັບລູກຄ້າໃນການຊື້ ຂາຍຫຼັກຊັບ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ປະຕິບັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ປະຕິບັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ບໍ່ສອດຄ່ອງກັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ທີ່ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ພາຍໃນ ສປປ ລາວ ເຮັດສັນຍາບໍລິການທຸລະກິດຫຼັກຊັບ ກັບ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາດຳເນີນທຸລະກິດຫຼັກຊັບຢູ່ ສປປ ລາວ ໂດຍບໍ່ແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ;

8. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ນຳໃຊ້ການບໍລິການຂອງບໍລິສັດຫຼັກຊັບ ຫຼື ນັກວິຊາຊີບທຸລະກິດຫຼັກຊັບ ທີ່ບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

9. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບຂໍ້ຫ້າມຂອງນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ມີດັ່ງນີ້:

1. ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ບໍ່ເຮັດສັນຍາບໍລິການກັບບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ລວມທັງ ເຄື່ອນໄຫວໃຫ້ບໍລິການຮູບແບບອື່ນນອກເໜືອຈາກທີ່ໄດ້ຮັບການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ນັກວິຊາຊີບທຸລະກິດຫຼັກຊັບອິດສະລະຈາກຕ່າງປະເທດ ທີ່ບໍ່ສັງກັດຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ເຂົ້າມາເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ;

3. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 23 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 24 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍສືບຕໍ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ກ່ອນວັນທີ່ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈະໝົດອາຍຸ ຕໍ່າກວ່າ 30 ວັນ, ບໍ່ໃຫ້ການຮ່ວມມືກັບພາກສ່ວນກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ຮັບມອບສິດຈາກລູກຄ້າ ຫຼື ຕັດສິນໃຈແທນໃນການຊື້ ຂາຍ ຫຼື ໂອນຫຼັກຊັບ ຂອງລູກຄ້າ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງ ທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າຫຼັກຊັບ ທີ່ມີການຊື້ ຂາຍ ຫຼື ໂອນ;

3. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ ໃຫ້ແກ່ຕົນເອງ ຫຼື ບຸກຄົນອື່ນ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງ ທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າເສຍຫາຍຂອງລູກຄ້າ. ກໍລະນີບໍ່ມີຄວາມເສຍຫາຍ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 25.000.000 ກີບ;

4. ຍັກຍອກ ຫຼື ສໍ້ໂກງ ເງິນ ຫຼື ລັກຊັບຂອງລູກຄ້າ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງ ທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າທີ່ ຍັກຍອກ ຫຼື ສໍ້ໂກງ;

5. ຮ່ວມມືກັບລູກຄ້າໃນການຊື້ ຂາຍຫຼັກຊັບ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງ ທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ 3 ເທົ່າ ຂອງກຳໄລທີ່ໄດ້ຈາກການຊື້ ຂາຍຫຼັກຊັບ. ກໍລະນີ ບໍ່ມີກຳໄລ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 25.000.000 ກີບ;

6. ປະຕິບັດໜ້າທີ່ເປັນວິຊາຊີບທຸລະກິດຫຼັກຊັບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 30.000.000 ກີບ;

7. ປະຕິບັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບ ບໍ່ສອດຄ່ອງກັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ທີ່ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ມີສ່ວນກ່ຽວຂ້ອງ ທາງກົງ ແລະ ທາງອ້ອມ ແຕ່ລະລາຍ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

8. ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ພາຍໃນ ສປປ ລາວ ເຮັດສັນຍາບໍລິການທຸລະກິດຫຼັກຊັບ ກັບ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາດຳເນີນທຸລະກິດຫຼັກຊັບຢູ່ ສປປ ລາວ ໂດຍບໍ່ແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າສັນຍາບໍລິການ. ໃນບາງກໍລະນີອາດຈະຖືກ ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

9. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ນຳໃຊ້ການບໍລິການຂອງບໍລິສັດຫຼັກຊັບ ຫຼື ນັກວິຊາຊີບທຸລະກິດຫຼັກຊັບ ທີ່ບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ;

10. ນັກວິຊາຊີບທຸລະກິດຫຼັກຊັບຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ບໍ່ເຮັດສັນຍາບໍລິການກັບບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ລວມທັງ ເຄື່ອນໄຫວໃຫ້ບໍລິການຮູບແບບອື່ນນອກເໜືອຈາກທີ່ໄດ້ຮັບການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ;

11. ນັກວິຊາຊີບທຸລະກິດຫຼັກຊັບອິດສະລະຈາກຕ່າງປະເທດ ທີ່ບໍ່ສັງກັດຢູ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ເຂົ້າມາເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

ມາດຕະການເພີ່ມເຕີມ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງ ຕາມການກຳນົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ;

3. ຖອນໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 25 (ປັບປຸງ) ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 26 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ສະບັບເລກທີ 004/ຄຄຊ, ລົງວັນທີ 18 ກຸມພາ 2014.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ສອນໄຊ ສີພັນດອນ